| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດສ້າງຕັ້ງໂຮງຮຽນນານາຊາດ, ປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ. | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoES-OED-3 | 06.12.2017 | ກົມສາມັນສຶກສາ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | P - ການສຶກສາ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເນື່ອງຈາກ ໂຮງຮຽນສາມັນສຶກສາ ແມ່ນ ໜຶ່ງໃນສະຖາບັນທີ່ສຳຄັນໃນການ ຈັດຕັ້ງປະຕິບັດແນວທາງນະໂຍບາຍການສຶກສາແຫ່ງຊາດ, ຈຶ່ງມີຄວາມຈຳເປັນຕ້ອງຂໍອະນຸຍາດ ເພື່ອຮັບປະກັນຄຸນະພາບ, ປະສິດທິພາບ ແລະ ຄວາມເປັນເອກະພາບໄດ້ມາດຕະຖານຂອງສະຖານການສຶກສານີ້ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫລື ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງໂຮງຮຽນສາມັນສຶກສາ ຊຶ່ງປະກອບດ້ວຍປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ,ມັດທະຍົມສຶກສາຕອນປາຍ ແລະ ມັດທະຍົມສົມບູນ ຊຶ່ງໃຊ້ເວລາຮຽນທັງໝົດ ສິບສອງປີ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | www.moes.edu.la/dge |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນກັບ ໃບອະນຸຍາດ | 1. ກົມສາມັນສຶກສາ ຈະພິຈາລະນາການອະນຸມັດສ້າງຕັ້ງ ສະເພາະ ໂຮງຮຽນສາມັນສຶກສາທີ່ນຳໃຊ້ຫລັກສູດຕ່າງປະເທດ. 2. ການອະນຸມັດສ້າງຕັ້ງ ແລະ ຂໍຕໍ່ທະບຽນໂຮງຮຽນສາມັນສຶກສາພາກເອກະຊົນ, ຜູ້ປະກອບການສະເໜີຜ່ານຫ້ອງການສຶກສາທິການ ແລະ ກິລາເມືອງ ແລ້ວ ສະເໜີພະແນກສຶກສາທິການ ແລະ ກິລາແຂວງ,ນະຄອນຫລວງ 3. ການຂໍອະນຸຍາດດຳເນີນການເປີດໂຮງຮຽນ ແລະ ຂະຫຍາຍຊັ້ນຮຽນ ໃຫ້ຍືນຄຳຮ້ອງເຖິງກົມສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານຫ້ອງການສຶກສາທິການ ແລະ ກິລາເມືອງ,ພະແນກສຶກສາທິການ ແລະ |

| ຂໍ້ມູນພື້ນຖານ | |
|---|---|
| | ກິລາແຂວງ,ນະຄອນຫລວງ ກ່ອນວັນເປີດສົກຮຽນ ຢ່າງໜ້ອຍ 90 ວັນ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄຳຮ້ອງໃນການອອກໃບອະນຸຍາດ | 14 | ກົດໝາຍທີ່ກ່ຽວຂ້ອງບໍ່ໄດ້ລະບຸໄລຍະເວລາໃນການພິຈາລະນາ ແຕ່ເຈົ້າໜ້າທີ່ແຈ້ງວ່າ ໄລຍະເວລາໃນການພິຈາລະນາປົກກະຕິແມ່ນບໍ່ກາຍ 14 ວັນລັດຖະການ ທັງນີ້ ແມ່ນຕ້ອງຜ່ານການກວດກາສະຖານທີ່ທີ່ຖືກຕ້ອງແລ້ວ |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | I. ເງື່ອນໄຂທາງດ້ານນັກຮຽນ ແລະ ຄູ - ຕ້ອງມີເດັກ ຢ່າງໜ້ອຍ 30 ຄົນ ແລະ ມີຄູ 2 ຄົນຂຶ້ນໄປ ແລະ ເຂດຫ່າງໄກສອກຫລີກ ແມ່ນຕ້ອງມີເດັກ ຢ່າງໜ້ອຍ 15 ຄົນ ແລະ ມີ ຄູ 1 ຄົນ ຂຶ້ນໄປ ແລະ ຄູຕ້ອງມີວຸດທິການສຶກສາຈົບຈາກສະຖາບັນສ້າງຄູປະຖົມ,ສຳລັບມັດທະຍົມຕ້ອງບັນຈຸຄູໃຫ້ຄົບຕາມຫລາຍວິຊາຂອງຫລັກສູດ II. ເງື່ອນໄຂທາງດ້ານທີ່ຕັ້ງ - ຕ້ອງຕັ້ງຢູ່ໃນບໍລິເວນຂອບເຂດບ້ານ ໄປມາສະດວກ ປາສະຈາກສິ່ງລົບກວນຕ່າງໆ, ຫ່າງໄກຈາກບໍລິເວນທີ່ເປັນອັນຕະລາຍ III. ເງື່ອນໄຂດ້ານອາຄານ ແລະ ສະຖານທີ່ - 1. ຂອບເຂດໂຮງຮຽນ ຕ້ອງມີເນື້ອທີ່ທັງໝົດ 30-40 ຕາແມັດຕໍ່ນັກຮຽນ 1 ຄົນ; 2. ໂຮງຮຽນຕ້ອງມີສິ່ງອຳນວຍຄວາມສະດວກຄົບຖ້ວນ, ມີຮົ້ວ ແລະ ປະດັບຕົກແຕ່ງສະອາດຈົບງາມ ທັງນີ້ ອາຄານຕ້ອງຖືກຕ້ອງຕາມມາດຕະຖານອອກແບບຂອງ ກະຊວງສຶກສາທິການ ແລະ ກິລາ ແລະ ໄດ້ຮັບການອະນຸມັດປຸກສ້າງຈາກ ພາກສ່ວນກ່ຽວຂ້ອງ ຖ້າມີຫຼາຍຊັ້ນຮຽນເຊັ່ນ: ຊັ້ນອະນຸບານ, ປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ, ຕຶກອາຄານຂອງແຕ່ລະຊັ້ນຮຽນຕ້ອງແຍກກັນ ແລະ ມີຮົ້ວຂັ້ນ. IV. ເງື່ອນໄຂຫ້ອງຮຽນ - ຂະໜາດຫ້ອງຮຽນຖືກຕ້ອງຕາມມາດຕະຖານອອກແບບຂອງກະຊວງສຶກສາທິການ ແລະ ກິລາ ກຳນົດອອກ ເຊັ່ນ ສາມາດຮັບນັກຮຽນ 30 ເຖິງ 40 ຄົນ ຫລື ນັກຮຽນ 1 ຄົນຕໍ່ເນື້ອທີ່ 1.6 ຕາແມັດ ໂດຍແຕ່ລະຫ້ອງຕ້ອງປະກອບດ້ວຍອຸປະກອນພື້ນຖານຮັບໃຊ້ໃນການຮຽນ-ການສອນ V. ນິຕິບຸກຄົນທີ່ຈະສ້າງຕັ້ງ ຕ້ອງມີທຶນ ຫລື ຈຳນວນຮຸ້ນເປັນຂອງຜູ້ຖືຮຸ້ນລາວ ຕ້ອງບໍ່ຫລຸດ 30% ຂອງຈຳນວນເງິນທຶນ ຫລື ຈຳນວນຮຸ້ນທັງໝົດ ແລະ ຕ້ອງມີຈຳນວນຜູ້ຖືຮຸ້ນ ທີ່ມີສັນຊາດລາວ ບໍ່ຫລຸດກວ່າ 50% ຂອງຈຳນວນຜູ້ຖືຮຸ້ນ (ສຳລັບຊັ້ນປະຖົມສຶກສາມັດທະຍົມ). | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ | ປະຕິເສດກໍລະນີທີ່ ຜູ້ຍື່ນຄຳຮ້ອງບໍ່ສາມາດປະຕິບັດຕາມເງື່ອນໄຂຄຸນສົມບັດທີ່ກຳນົດໄວ້ໄດ້ | |

| ຄຸນະສົມບັດ ແລະ ເອກະສານປະກອບ | |
|---|---|
| ? | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກຳນົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 24 |
| **ຂັ້ນຕອນ ແລະ ເງື່ອນໄຂ ສຳລັບການຕໍ່ອາຍຸໃບ ອະນຸຍາດ** | ຜູ້ຂໍຕໍ່ໃບອະນຸຍາດ ຕ້ອງຍືນບົດລາຍງານການຈັດຕັ້ງປະຕິບັດກະດຳເນີນງານຂອງປີທີ່ຜ່ານມາ ແລະ ພ້ອມທັງມີການລົງຕິດຕາມປະເມີນຜົນ. |

| ຄ່າທຳນຽມ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມຄຳ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາ ການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 100000.00 | 0.00 | 100000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ ເລກທີ 03/ປທ | | | |

| ຄ່າທຳນຽມການຕໍ່ອາຍຸ | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 100000.00 | 0.00 | 100000.00 |
| **ຄຳເຫັນ** | ອີງຕາມ ລັດຖະດຳລັດ ເລກທີ 03/ປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ກົດໝາຍວ່າດ້ວຍ ການສຶກສາ (ສະບັບປັບປຸງ) | 62/ສພຊ | 16.07.2015 | ພາກທີ III ສະຖານການສຶກສາ (ມາດຕາ 29 |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| | | | ຫາມາດຕາ 32) |
| ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງໂຮງຮຽນເອກະຊົນນານາຊາດ ຂອງການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ. | 1052/ສສກ.ມຍ | 26.02.2016 | ມາດຕາ 9 ຫາ 12<br>ປະເພດສະຖານການສຶກສາທີ່ອະນຸມັດໃຫ້ສ້າງຕັ້ງ |
| ຂໍ້ຕົກລົງວ່າດ້ວຍ ຫຼັກການຄຸ້ມຄອງໂຮງຮຽນປະຖົມສຶກສາ. | 1372/ສສກ.ອປ | 30.03.2015 | |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ແຜນການສອນ, ບັນຊີອຸປະກອນສື່ການຮຽນ-ການສອນ |
| ກົດລະບຽບການດຳເນີນງານພາຍໃນ |
| ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົວເອງ |
| ໂຄງຮ່າງການຈັດຕັ້ງຂອງວິສາຫະກິດ |
| ໃບຕາດິນ |
| ໃບຢັ້ງຢືນວຸດທິການສຶກສາ |
| ໃບອະນຸຍາດປຸກສ້າງ |
| ບົດວິພາກເສດຖະກິດເຕັກນິກ |
| ຮູບ |
| ໜັງສືຢັ້ງຢືນການອະນຸມັດນຳໃຊ້ຫຼັກສູດ ຈາກກະຊວງສຶກສາທິການ ແລະ ກິລາ |
| ແຜນການຮັບນັກຮຽນ, ຄູ. |
| ລາຍການປຶ້ມຕຳລາ ແລະ ປຶ້ມອ່ານເສີມໃນຫ້ອງສະໝຸດໂຮງຮຽນ |
| ສຳເນົາບັດປະຈຳຕົວ/ສຳມະໂນຄົວຂອງອຳນວຍການ |
| ບັນຊີຜູ້ຖືຮຸ້ນ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈຳກັດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | 2 | 0 |